# Curriculum on Basic Skills in legal profession
# for enforcement and court judgement (Laos)

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 4
## Structure of personnel
## ໂຄງປະກອບບຸກຄະລາກອນ

### 1. ໂຄງປະກອບບຸກຄະລາກອນຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ

ບຸກຄະລາກອນຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ ປະກອບມີ: ຫົວໜ້າກົມ 01 ທ່ານ, ຮອງຫົວໜ້າກົມຈຳນວນໜຶ່ງ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການ ຈຳນວນໜຶ່ງ[1].

1) ຫົວໜ້າກົມໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ບົນພື້ນຖານຄວາມເປັນເອກະພາບກັບລັດຖະມົນຕີກະຊວງຍຸຕິທຳ.

ຫົວໜ້າກົມເປັນຜູ້ຮັບຜິດຊອບຕໍ່ຄະນະນຳກະຊວງຍຸຕິທຳກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງຕ່າງໆໃນການຈັດຕັ້ງປະຕິບັດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງກົມຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ. ໃນເວລາຕິດຂັດ ຫຼື ບໍ່ຢູ່ ຫົວໜ້າກົມຕ້ອງມອບສິດໃຫ້ຮອງຫົວໜ້າກົມທ່ານໃດໜຶ່ງເປັນຜູ້ຮັກສາການແທນ.

2) ຮອງຫົວໜ້າກົມຈຳນວນໜຶ່ງ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍລັດຖະມົນຕີກະຊວງຍຸຕິທຳບົນພື້ນຖານຄວາມເປັນເອກະພາບກັບກະຊວງພາຍໃນ.

ຮອງຫົວໜ້າກົມ ເປັນຜູ້ຊ່ວຍວຽກຫົວໜ້າກົມໃນການປະຕິບັດພາລະບົດບາດ, ໜ້າທີ່ຂອງກົມ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າກົມ.

3) ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການຈຳນວນໜຶ່ງ ໄດ້ຮັບການບັນຈຸ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍລັດຖະມົນຕີກະຊວງຍຸຕິທຳ.

ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ວິຊາການ ປະຕິບັດໜ້າວຽກຕາມພາລະບົດບາດ ແລະ ຕຳແໜ່ງງານທີ່ກຳນົດໄວ້.

ໃນສະພາບການຕົວຈິງໂຄງປະກອບບຸກຄະລາກອນພາຍໃນກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານໄດ້ຖືກສັບຊ້ອນຕາມບັນດາໜ້າວຽກຕົ້ນຕໍດັ່ງນີ້:

---

[1] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ ສະບັບເລກທີ 462/ກຍ, ລົງວັນທີ 09 ພຶດສະພາ 2017 ວ່າດ້ວຍການ ແລະ ການເຄື່ອນໄຫວ ຂອງກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ, ໜ້າທີ 3

1) ຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ;

2) ຮອງຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ (1);

3) ຮອງຫົວໜ້າກົມຄຸ້ມຄອງການປະຕິບັດຄຳຕັດສິນຂອງສານ (2);

4) ຫົວໜ້າພະແນກສັງລວມ ແລະ ບໍລິຫານ;

5) ຫົວໜ້າພະແນກຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຄະດີແພ່ງ;

6) ຫົວໜ້າພະແນກຄຸ້ມຄອງການປະຕິບັດຄຳຕັດສິນຂອງສານຄະດີອາຍາ;

7) ຫົວໜ້າພະແນກຕິດຕາມ-ກວດກາ ແລະ ສະຖິຕິຄຳຕັດສິນຂອງສານ;

8) ຮອງຫົວໜ້າພະແນກສັງລວມ ແລະ ບໍລິຫານ;

9) ຮອງຫົວໜ້າພະແນກຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຄະດີແພ່ງ;

10)ຮອງຫົວໜ້າພະແນກຄຸ້ມຄອງການປະຕິບັດຄຳຕັດສິນຂອງສານຄະດີອາຍາ;

11)ຮອງຫົວໜ້າພະແນກຕິດຕາມ-ກວດກາ ແລະ ສະຖິຕິຄຳຕັດສິນຂອງສານ;

12)ວິຊາການຈຳນວນໜຶ່ງປະຈຳຢູ່ແຕ່ລະພະແນກ.

**2. ໂຄງປະກອບບຸກຄະລາກອນຂອງຫ້ອງການ(ຂະແໜງ)ປະຕິບັດຄຳຕັດສິນຂອງສານ**

ບຸກຄະລາກອນຂອງຫ້ອງການ( ຂະແໜງ ) ປະຕິບັດຄຳຕັດສິນຂອງສານແມ່ນບຸກຄະລາກອນຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ ຊຶ່ງປະກອບດ້ວຍ:

- ຫົວໜ້າຫ້ອງການ(ຂະແໜງ)ປະຕິບັດຄຳຕັດສິນຂອງສານ;
- ຮອງຫົວໜ້າຫ້ອງການ(ຂະແໜງງ)ປະຕິບັດຄຳຕັດສິນຂອງສານ;
- ພະນັກງານປະຕິບັດຄຳຕັດສິນຂອງສານ, ວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ[2].

ຫົວໜ້າຫ້ອງການ(ຂະແໜງ), ຮອງຫົວໜ້າຫ້ອງການ(ຂະແໜງ) ແລະ ວິຊາການຈຳນວນໜຶ່ງໄດ້ຮັບການບັນຈຸ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

ຫົວໜ້າຫ້ອງການ(ຂະແໜງ), ຮອງຫົວໜ້າຫ້ອງການ(ຂະແໜງ) ແລະ ວິຊາການຈຳນວນໜຶ່ງໃນຫ້ອງການ(ຂະແໜງ)ປະຕິບັດຄຳຕັດສິນຂອງສານປະຕິບັດໜ້າວຽກຕາມພາລະບົດບາດ ແລະ ຕຳແໜ່ງງານທີ່ກຳນົດໄວ້[3].

**3. ໂຄງປະກອບບຸກຄະລາກອນຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານ**

ບຸກຄະລາກອນຂອງໜ່ວຍງານປະຕິບັດຄຳຕັດສິນຂອງສານແມ່ນບຸກຄະລາກອນຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ ຊຶ່ງປະກອບດ້ວຍ:

- ຫົວໜ້າໜ່ວຍງານ;

---

[2] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 15

[3] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 1268/ກຍ, ລົງວັນທີ 18 ພະຈິກ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ, ມາດຕາ 6,ຂໍ້ 3.

- ຮອງຫົວໜ້າໜ່ວຍງານ;
- ພະນັກງານປະຕິບັດຄຳຕັດສິນຂອງສານ, ວິຊາການ ແລະ ພະນັກງານບໍລິຫານຈຳນວນໜຶ່ງ[4].

ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການຈຳນວນໜຶ່ງໄດ້ຮັບການບັນຈຸ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນຕາມການສະເໜີຂອງຫົວໜ້າຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ.

ຫົວໜ້າ, ຮອງຫົວໜ້າໜ່ວຍງານ ແລະ ວິຊາການປະຕິບັດໜ້າທີ່ຕາມພາລະບົດບາດ ແລະ ຕຳແໜ່ງງານທີ່ກຳນົດໄວ້[5].

**4. ພະນັກງານປະຕິບັດຄຳຕັດສິນຂອງສານ.**

- **ພະນັກງານປະຕິບັດຄຳຕັດສິນຂອງສານ ແມ່ນບຸກຄົນ ດັ່ງນີ້:**

- ເປັນລັດຖະກອນ;

- ຜູ້ທີ່ມີມາດຕະຖານ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 (ໃໝ່) ຂອງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;

- ເຮັດວຽກຢູ່ອົງການປະຕິບັດຄຳຕັດສິນຂອງສານ;

- ຮັບຜິດຊອບໂດຍກົງໃນການຄົ້ນຄວ້າ ແລະ ປະຕິບັດຄຳຕັດສິນຂອງສານ .

- **ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:**

- ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 25 ປີ ຂຶ້ນໄປ;

- ມີທັດສະນະຫລັກໝັ້ນຊຶນຊັ້ນ ແລະ ມີຄວາມໜັກແໜ້ນທາງດ້ານການເມືອງ;

- ມີຄຸນສົມບັດ, ມີຈັນຍາບັນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ມີຄວາມສັດຊື່ບໍລິສຸດຕໍ່ປະເທດຊາດ, ຕໍ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ມີມະນຸດສຳ ພັນດີ;

- ມີຄວາມຮູ້, ມີນ້ຳໃຈກ້າຫານ, ອົດທົນ, ມີຄວາມສາມາດຊອນເຊື່ອໃຫ້ປະຕິບັດຄຳຕັດສິນຂອງສານ;

- ຈົບການສຶກສາວິຊາກົດໝາຍຊັ້ນກາງຂຶ້ນໄປ ຫລືໄດ້ຮັບການບຳລຸງວິຊາກົດໝາຍ ແລະໄດ້ຮັບການຝຶກອົບຮົມກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ;

- ມີປະສົບການ ກ່ຽວກັບວຽກງານການປະຕິບັດຄຳຕັດສິນຂອງສານ ຢ່າງໜ້ອຍ ສອງ ປີ;

- ມີສຸຂະພາບສົມບູນດີ[6].

- **ສິດ ແລະ ໜ້າທີ່ຂອງພະນັກງານປະຕິບັດຄຳຕັດສິນຂອງສານ:**

---

[4] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 18

[5] ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 077/ກຍ, ລົງວັນທີ 22 ມັງກອນ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ, ມາດຕາ 6, ຂໍ້ 3.

[6] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 22

- ຄົ້ນຄວ້າຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນ ເພື່ອກະກຽມປະຕິບັດ. ໃນການປະຕິບັດຄຳຕັດສິນຂອງສານ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນຄຳຕັດສິນຂອງສານ , ຕາມ ລະບຽບການ ແລະ ຂັ້ນຕອນຂອງກົດໝາຍປະຕິບັດຄຳຕັດສິນຂອງສານ;

- ສະເໜີຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ເພື່ອໃຫ້ສານທີ່ໄດ້ລົງຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັ້ນ ອະທິບາຍຢ່າງເປັນລາຍລັກອັກສອນ ກ່ຽວກັບບັນຫາໃດບັນຫາໜຶ່ງ ທີ່ຍັງບໍ່ທັນຈະແຈ້ງ;

- ອອກໝາຍຮຽກຄູ່ຄວາມ ເພື່ອແຈ້ງເນື້ອໃນຄຳຕັດສິນຂອງສານໃຫ້ຊາບ ພ້ອມທັງ ແນະນຳ, ສຶກສາອົບຮົມ ແລະ ຊຸກຍູ້ໃຫ້ປະຕິບັດ;

- ເກັບກຳຂໍ້ມູນ ກ່ຽວກັບຊັບສິນ ແລະ ເງື່ອນໄຂຕ່າງໆ ຂອງຜູ້ຖືກປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດຄຳຕັດສິນຂອງສານ;

- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດຄຳຕັດສິນຂອງສານ;

- ສະເໜີໃຫ້ຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ ອອກຄຳສັ່ງອາຍັດ, ຄຳສັ່ງຍຶດຊັບ, ຄຳສັ່ງຍົກຍ້າຍ, ຄຳສັ່ງໃຫ້ພາຕົວ, ຄຳສັ່ງປັບໃໝ ຫລື ສະເໜີຕໍ່ເຈົ້າໜ້າທີ່ຕຳຫລວດ ມີມາດຕະການຕໍ່ຜູ້ຖືກປະຕິບັດຄຳຕັດສິນຂອງສານ ທີ່ມີເຈດຕະນາຫລົບຫລີກການປະຕິບັດຄຳຕັດສິນຂອງ ສານນັ້ນ ບໍ່ໃຫ້ອອກນອກປະເທດ ແລະ ຄຳສັ່ງອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ;

- ລາຍງານ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ທີ່ຕົນໄດ້ຮັບມອບໝາຍໃຫ້ປະຕິບັດນັ້ນ ຕໍ່ຫົວໜ້າຫ້ອງການ ຫລື ຫົວໜ້າໜ່ວຍງານປະຕິບັດຄຳຕັດສິນຂອງສານ;

- ປະຕິບັດສິດ ແລະ ໜ້າທີ່ອື່ນ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ[7].

ນອກຈາກສິດ ແລະ ໜ້າທີ່ ທີ່ໄດ້ກ່າວໄວ້ໃນຂ້າງເທິງນັ້ນ ຍັງມີຄວາມຮັບຜິດຊອບ ດັ່ງນີ້:

- ຕ້ອງຈົດສຳນວນຄຳຕັດສິນຂອງສານເຂົ້າປຶ້ມບັນທຶກຂອງຕົນ;

- ຂຶ້ນແຜນການ ແລະ ກະກຽມເງື່ອນໄຂຕ່າງໆ ໃນການປະຕິບັດໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ກຳນົດເວລາທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍການປະຕິບັດຄຳຕັດສິນຂອງສານ;

- ໃນເວລາຮຽກຄູ່ຄວາມເຂົ້າມາແຈ້ງເນື້ອໃນຄຳຕັດສິນຂອງສານ, ອະທິບາຍ, ຊີ້ແຈງກ່ຽວກັບຂັ້ນຕອນ, ວິທີ, ກຳນົດເວລາ, ມາດຕະການຕ່າງໆໃນການປະຕິບັດຄຳຕັດສິນຂອງສານ ຕາມທີ່ກຳນົດໄວ້ໃນກົດໝາຍໃຫ້ຜູ້ຖືກປະຕິບັດຄຳຕັດສິນຊາບ ຕ້ອງເຮັດບົດບັນທຶກທຸກຄັ້ງ;

- ຄົ້ນຄວ້າ ແລະ ນຳໃຊ້ມາດຕະການທາງດ້ານກົດໝາຍ ເພື່ອປົກປ້ອງສິດຜົນປະໂຫຍດຂອງຄູ່ຄວາມ;

---

[7] ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008, ມາດຕາ 21

- ໃນກໍລະນີທີ່ຄູ່ຄວາມ ຫຼື ຜູ້ຖືກປະຕິບັດຄຳຕັດສິນຫາກບໍ່ເຂົ້າມາຕາມໝາຍຮຽກ ພະນັກງານປະຕິບັດຄຳຕັດສິນຂອງສານ ຕ້ອງເກັບກຳຂໍ້ມູນໃຫ້ລະອຽດ ,ຖ້າເຫັນວ່າຜູ້ຖືກຮຽກມີເຈດຕະນາຫຼົບຫຼີກບໍ່ເຂົ້າມາໂດຍບໍ່ມີເຫດຜົນ ຕ້ອງລາຍງານຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານ ເພື່ອອອກຄຳສັ່ງພາຕົວຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

- ທຸກກໍລະນີ ຖ້າຜູ້ຖືກປະຕິບັດຄຳຕັດສິນຫາກໄດ້ປະຕິບັດຄົບຖ້ວນຕາມຄຳຕັດສິນຂອງສານແລ້ວ ກໍຖືວ່າການປະຕິບັດສຳເລັດ ,ພະນັກງານປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງສະຫຼຸບເປັນລາຍລັກອັກສອນລາຍງານຫົວໜ້າຫ້ອງການ ຫຼື ໜ່ວຍງານ ເພື່ອສະເໜີອອກຄຳສັ່ງປິດສຳນວນຄຳຕັດສິນຂອງສານ;

- ທຸກກໍລະນີ ກ່ຽວກັບການປະຕິບັດທີ່ເຫັນວ່າມີຄວາມຫຍຸ້ງຍາກ ບໍ່ສາມາດປະຕິບັດໄດ້ ພະນັກງານປະຕິບັດຄຳຕັດສິນຂອງສານຜູ້ຮັບຜິດຊອບຄະດີ ຕ້ອງຮີບຮ້ອນສະຫຼຸບລາຍງານຂໍຄຳເຫັນຈາກຫົວໜ້າຫ້ອງການ ,ໜ່ວຍງານປະຕິບັດຄຳຕັດສິນຂອງສານ.

**References:**


1. ກົດໝາຍວ່າດ້ວຍປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ) ປີ 2008;
2. ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 1268/ກຍ, ລົງວັນທີ 18 ພະຈິກ 2017 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກຍຸຕິທຳແຂວງ, ນະຄອນຫຼວງ;
3. ຂໍ້ຕົກລົງຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 077/ກຍ, ລົງວັນທີ 22 ມັງກອນ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການຍຸຕິທຳເມືອງ, ເທດສະບານ, ນະຄອນ.